ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 0019 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 25 ພຶດສະພາ 2020

# ແຈ້ງການ

**ເຖິງ: ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ;**

**ເລື່ອງ: ການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS).**

- ອີງຕາມ ກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການຂອງກະຊວງການເງິນ ສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020.

ເພື່ອເພີ່ມທະວີຄວາມເຊື່ອໝັ້ນດ້ານການລົງທຶນ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອກະກຽມໃຫ້ແກ່ການເຊື່ອມໂຍງກັບຕະຫຼາດທຶນໃນພາກພື້ນ ແລະ ສາກົນ, ຄະນະກຳມະການຄຸ້ມຄອງຫຼັກຊັບ ແຈ້ງມາຍັງບັນດາບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ກ່ຽວກັບການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ດັ່ງນີ້:

1. ອີງຕາມແຈ້ງການຂອງກະຊວງການເງິນ ສະບັບເລກທີ 697/ກງ ລົງວັນທີ 20 ມີນາ 2017 ໄລຍະຂ້າມຜ່ານການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແມ່ນສິ້ນສຸດໃນປີ 2021. ແຕ່ເພື່ອຮັບປະກັນການຈັດຕັ້ງປະຕິບັດ ກະຊວງການເງິນ ໄດ້ຂະຫຍາຍໄລຍະເວລາຂ້າມຜ່ານຕື່ມອີກ ໄປຮອດປີ 2025. ສະນັ້ນ, ໃນໄລຍະຂ້າມຜ່ານນີ້ ໃຫ້ບໍລິສັດຈົດທະບຽນ ຄົ້ນຄວ້າສ້າງແຜນການລະອຽດກ່ຽວກັບການຂ້າມຜ່ານໄປສູ່ການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຂອງຕົນ ແລ້ວນຳສົ່ງໃຫ້ ສຄຄຊ ເພື່ອຊຸກຍູ້ ແລະ ຕິດຕາມການປະຕິບັດ;
2. ໃຫ້ບໍລິສັດຈົດທະບຽນ ເລີ່ມປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ທີ່ສະພາມາດຕະຖານສາກົນດ້ານການບັນຊີ (International Accounting Standards Board: IASB) ໄດ້ຮັບຮອງ ແລະ ປະກາດໃຊ້ ໃນແຕ່ລະໄລຍະ ນັບແຕ່ປີ 2026 ເປັນຕົ້ນໄປ. ສຳລັບ ບໍລິສັດຈົດທະບຽນທີ່ມີຄວາມພ້ອມໃນການປະຕິບັດ ແລະ ສ້າງເອກະສານລາຍງານການເງິນ ຕາມມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແມ່ນໃຫ້ປະຕິບັດໄດ້ເລີຍ;
3. ສຳລັບ ບໍລິສັດຈົດທະບຽນໃດ ທີ່ໄດ້ປະຕິບັດ ແລະ ສ້າງເອກະສານລາຍງານການເງິນ ຕາມມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ມາແລ້ວ ກໍໃຫ້ສືບຕໍ່ປະຕິບັດ;



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານໂພນສະອາດ, ໜ່ວຍ 20, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-217806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la

4. ສຳລັບ ບໍລິສັດຈົດທະບຽນໃດ ທີ່ຍັງບໍ່ທັນໄດ້ປະຕິບັດ ແລະ ສ້າງເອກະສານລາຍງານການເງິນ ຕາມມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ເທື່ອ ແມ່ນໃຫ້ສ້າງເອກະສານລາຍງານການເງິນຕາມມາດຕະຖານລາຍງານການເງິນທີ່ຖືກຮັບຮອງຕາມຄວາມເໝາະສົມ ແລະ ສອດຄ່ອງກັບລະບຽບກົດໝາຍກຳນົດອອກແຕ່ລະໄລຍະ.

ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 014/ຄຄຊ ລົງວັນທີ 25 ທັນວາ 2013.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ★ ປະທານ

ສົມດີ ດວງດີ